Savan PAD ຈົດໝາຍແຈ້ງຂ່າວ

31 ມີນາ, 2021

17

# ຜົນໄດ້ຮັບຂອງກິດຈະກຳໃນຊ່ວງລະດູຝົນປີ 2020

ກອງປະຊຸມ PMU ຄັ້ງທີ 8

ຜົນຮັບກິດຈະກຳຂອງໂຄງການໃນຊ່ວງລະດູຝົນປີ 2020 (ພຶດສະພາ-ຕຸລາ 2020) ໄດ້ຖືກລາຍງານໃນກອງປະຊຸມ ໜ່ວຍ ງານຄຸ້ມຄອງໂຄງການຄັ້ງທີ 8 (PMU8) ທີ່ຈັດຂຶ້ນໃນເດືອນກຸມພາ.

ບົດສະຫຼຸບຂອງຜົນໄດ້ຮັບແມ່ນສະແດງຢູ່ດ້ານລຸ່ມ.



## ດ້ານຊົນລະປະທານ / ການສ້າງຄວາມເຂັ້ມແຂງໃຫ້ກຸ່ມຜູ້ນຳໃຊ້ນ້ຳ

1) ການຝຶກອົບຮົມປັບປຸງເຕັກນິກຂອງພະນັກງານຂັ້ນເມືອງ.
   - ທັກສະເພື່ອ: ການສ້າງແຜນທີ່ຊົນລະປະທານ, ການວັດແທກເນື້ອທີ່ດິນ, ການວັດແທກເນື້ອທີ່ໂດຍໃຊ້ GPS, ການວັດແທກປະລິມານນ້ຳໄຫລ ແລະ ອື່ນໆ.

2) ການປັບປຸງບັນຊີຂອງກຸ່ມນຳໃຊ້ນ້ຳ .
   - ທຸກໂຄງການເປົ້າໝາຍໄດ້ຈ່າຍຄ່າກະແສໄຟຟ້າຂອງຈັກສູບນ້ຳຊົນລະປະທານ (ຈ່າຍແລ້ວ 100%, ບໍ່ໄດ້ຊັກຊ້າ).
   - ອັດຕາການເກັບຄ່ານຳໃຊ້ນ້ຳ 98%.

3) ການເດີນທາງຂອງກຸ່ມນຳໃຊ້ນ້ຳທີ່ມີປະສົບການແລ້ວເພື່ອໄປແນະນຳກ່ຽວກັບການຈັດການກຸ່ມໃຫ້ກັບກຸ່ມນຳໃຊ້ນ້ຳຢູ່ໂຄງການເປົ້າໝາຍອື່ນໆ.

4) ກອງປະຊຸມປົກກະຕິ ຂອງອົງກອນນຳໃຊ້ນ້ຳແລະການເລືອກຕັ້ງຄະນະກຸ່ມ.

5) ຊ່ວຍເຫຼືອແຜນການແຈກຢາຍນ້ຳໃນຊ່ວງລະດູແລ້ງ.



ການຝຶກອົບຮົມດ້ານເຕັກນິກໃຫ້ແກ່ພະນັກງານຂັ້ນເມືອງ



ການເລືອກຕັ້ງສະມາຊິກຄະນະຂອງກຸ່ມຜູ້ນຳໃຊ້ນ້ຳ

## ດ້ານເຕັກນິກກະສິກຳ (ການຜະລິດເຂົ້າ)

1) ນະໂຍບາຍກູ້ຢືມແນວພັນເຂົ້າ ແລະ ປຸ໋ຍ.
   - ພື້ນທີ່ເປົ້າໝາຍ: ຂະຫຍາຍໄປຮອດ 7 ຂົງເຂດ.
   - ຜູ້ເຂົ້າຮ່ວມ : 368 ຄຄ (961 ຄຄ ຂອງທັງໝົດ).
   - ຜົນຜະລິດ : ເພີ່ມຂຶ້ນປະມານ. 20% ໃນ 3 ບ່ອນ (ສົມທຽບໃສ່ລະດູຝົນປີ 2017).
   - ຄ່າກູ້ຢືມ : 92% ໄດ້ເກັບແລ້ວ,ແຕ່ພົບວ່າການເກັບກຳຍັງຊັກຊ້າ.

2) ການຝຶກອົບຮົມປັບປຸງເຕັກນິກຂອງພະນັກງານຂັ້ນເມືອງ.
   - ການຄວບຄຸມແມງໄມ້ໂດຍການນຳໃຊ້ນ້ຳໝັກຊີວະພາບ, ວິທີການຂອງການສຳຫຼວດຜົນຜະລິດ.
   - ຄູ່ມືຄຳຖາມ-ຄຳຕອບໃຊ້ແນະນຳຊາວນາກ່ຽວກັບເຕັກນິກການປູກເຂົ້າ.

3) ການສ້າງຕັ້ງກຸ່ມຜະລິດເມັດພັນເຂົ້າ.
   - ຄຳແນະນຳ ກ່ຽວກັບການຜະລິດເມັດພັນເຂົ້າຢູ່ເມືອທ່າປາງທອງ.



ທັງຜູ້ເຂົ້າຮ່ວມ ແລະ ຜົນຜະລິດເພີ່ມຂຶ້ນ



ນາຜະລິດເມັດພັນເຂົ້າ

## ດ້ານການຕະຫຼາດ/ການປູກພືດສອນ

1) ການປັບປຸງທັກສະຂອງຊາວນາໃນດ້ານການຜະລິດ ແລະ ການຂາຍ.
- ການເຮັດຝຸ່ນບົ່ມ, ການຜະລິດຢາຄວບຄຸມສັດຕູພືດ ແລະ ຜະລິດນ້ຳສະກັດຕ່າງໆ, ເຕັກນິກການປູກພືດແບບພື້ນຖານ ແລະ ອື່ນໆ.
- ປະມານ 10% ຂອງຊາວນາໃນບ່ອນເປົ້າໝາຍໄດ້ເຂົ້າຮ່ວມການຝຶກອົບຮົມ ແລະ ກິດຈະກຳດ້ານທຸລະກິດກະສິກຳ.
- ລາຍໄດ້ສະເລ່ຍເພີ່ມຂຶ້ນໃນ 3 ບ່ອນເປົ້າໝາຍຈາກ 4 ບ່ອນທີ່ສາມາດສົມທຽບກັບປີຜ່ານມາ ລະດູຝົນ ປີ (2019).
- ເຮືອນຮົ່ມທີ່ໄດ້ສ້າງໃໝ່ 69 ຫຼັງ, ລວມທັງໝົດ 143 ຫຼັງ.
- ຫຼັງຈາກການເກັບກ່ຽວຜົນຜະລິດແລ້ວຊາວນາໄດ້ສົ່ງເງິນຄືນຄ່າຕົ້ນທຶນການສ້າງເຮືອນຮົ່ມ 50% ເພື່ອນຳເຂົ້າເປັນກອງທຶນກຸ່ມ.


ຕະຫຼາດຊາວນາຫຼາຍແຫ່ງໄດ້ເປີດຂຶ້ນ

2) ການສົ່ງເສີມການຂາຍ.
- ທົດລອງຂາຍໝາກເຜັດ, ຫອມລາບ, ໝາກເຂືອມ້ອງໃຫ້ແກ່ບໍລິສັດປຸງແຕ່ງຢູ່ຕ່າງແຂວງສົ່ງອອກຈາກສະຫວັນນະເຂດ.
- ຊຸກຍູ້ການປູກ ແລະ ຂາຍມັນຫວານ.


ຫອມລາບ ແລະ ໝາກເຜັດສົ່ງໃຫ້ບໍລິສັດປຸງແຕ່ງ
ເປັນການທົດລອງ

## ການຕິດຕາມ ແລະ ການປະເມີນຜົນ

ການສ້າງຕັ້ງທີມຕິດຕາມຂັ້ນເມືອງ.
- ທີມງານຮ່ວມມືກັນກັບຫ້ອງການແຜນການ ແລະ ການລົງທຶນເມືອງ, ຫ້ອງການກະສິກຳ ແລະປ່າໄມ້ເມືອງ.
- ສະເໜີໄປຫາ 8 ຕົວເມືອງ ແລະ ຈຳນວນສະມາຊິກຍັງຢູ່ພາຍໃຕ້ການພິຈາລະນາ.


ການຮັບຟັງສະພາບປະຈຸບັນ
ທີ່ເມືອງຊົນນະບູລີ

## *ຊ່ຽວຊານມາໃຫມ່* ທ່ານ ຮິລະບາຍະຊິ (ບໍລິຫານລັດ / ການຈັດການນ້ຳ)


ທ່ານ ຮິລະບາຍະຊິ (ຢູ່ໃຈກາງ) ແນະນຳການໃຊ້ງານ GPS ໃຫ້ພະນັກງານຂັ້ນເມືອງ

ເປັນສິ່ງຈຳເປັນທີ່ຕ້ອງໄດ້ຮ່ວມມືກັນລະຫວ່າງທຸກຂະແໜງການທີ່ກ່ຽວຂ້ອງໃນການບຳລຸງຮັກສາລະບົບຊົນລະປະທານ ແລະ ການແຈກຢາຍນ້ຳໄປສູ່ນາເຂົ້າ. ຝ່າຍລັດຖະບານມີບົດບາດໃນການສະໜັບ ສະໜູນດ້ານການເງິນ ແລະ ເຕັກນິກ. ກຸ່ມຜູ້ນຳໃຊ້ນ້ຳມີບົດບາດໃນການດຳເນີນງານ ແລະ ການຄຸ້ມຄອງລະບົບຊົນລະປະທານຢ່າງຖືກຕ້ອງ, ພ້ອມທັງບົດບາດຂອງຊາວນາໃນການສັງເກດເບິ່ງແຜນການແຈກຢາຍນ້ຳ. ຂ້າພະເຈົ້າ ຢາກອຸທິດຕົນເອງ ສຳລັບການສ້າງຂີດຄວາມສາມາດ ໃຫ້ພະນັກງານ ຂອງຂະແໜງການເຫຼົ່ານັ້ນເພື່ອປະຕິບັດຕາມພາລະບົດບາດຂອງພວກເຂົາ.

ນອກຈາກນັ້ນ, ການຮ່ວມມືລະຫວ່າງພາກສ່ວນທີ່ກ່ຽວຂ້ອງແມ່ນມີຄວາມສຳຄັນຫຼາຍສຳລັບການເຜີຍແຜ່ຮູບແບບຂອງ ການພັດທະນາກະສິກຳແບບມີສ່ວນຮ່ວມໃນແຂວງ. ສະນັ້ນ, ຂ້າພະເຈົ້າຈະເອົາໃຈໃສ່ຢ່າງຍິ່ງຕໍ່ກັບ ຄະນະສົ່ງເສີມກະສິກຳແບບມີສ່ວນຮ່ວມ (PAPC) ເປັນຫົວໜ່ວຍຫຼັກ ແລະ ປັບປຸງລະບົບຂອງການຕິດຕາມ-ປະເມີນຜົນ.

ຈົດໝາຍແຈ້ງຂ່າວຂອງໂຄງການ ສະຫວັນເພັດ
ໂຄງການພັດທະນາ ກະສິກຳ ແບບມີສ່ວນຮ່ວມ ແຂວງສະຫວັນນະເຂດ (ສະຫວັນເພັດ)
ຕູ້ ປ.ນ. 16, ຂະແໜງຊົນລະປະທານ, ພະແນກ ກະສິກຳ ແລະ ປ່າໄມ້ ແຂວງສະຫວັນນະເຂດ, (ໂທ : 041-252497)